ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ
Tel: 071 260700 Fax: 071 260718
Website: https://www.bol.gov.la/luangprabang
BOL–LPB

# ສົ່ງເສີມການນຳໃຊ້ເງິນກີບ ໃນວັນບຸນຫໍ່ເຂົ້າປະດັບດິນ ບຸນຊ່ວງເຮືອ ທີ່ແຂວງຫຼວງພະບາງ




ເພື່ອເປັນການຍົກສູງຄຸນຄ່າຂອງເງິນກີບ ແລະ ເປັນການສະເຫຼີມສະຫຼອງວັນບຸນສຳຄັນຂອງຊາວແຂວງຫຼວງພະບາງ, ນັ້ນກໍ່ຄື ວັນບຸນຫໍ່ເຂົ້າປະດັບດິນ "ບຸນຊ່ວງເຮືອ ທີ່ແຂວງຫຼວງພະບາງ" ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ຕັ້ງບູດໂຄສະນາ ແລະ ສ້າງກິດຈະກຳສົ່ງເສີມການນຳໃຊ້ເງິນກີບຂຶ້ນ ໃນຕອນເຊົ້າຂອງວັນທີ 26 ສິງຫາ 2022 ທີ່ແຄມນ້ຳຄານ ກໍ່ຄືພາຍໃນສະຖານທີ່ໃກ້ຄຽງທີ່ມີການແຂ່ງຂັນເຮືອຊ່ວງ ໂດຍການນຳພາຂອງ ທ່ານ ນາງ ໂພທິຈັນ ທຳມະເທວາ ຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ພ້ອມດ້ວຍຄະນະ ແລະ ພະນັກງານພາຍໃນ ທຫລ.ຫຼບ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງ ເພື່ອໂຄສະນາສົ່ງເສີມການນຳໃຊ້ເງິນກີບໃຫ້ກັບຫົວໜ່ວຍທຸລະກິດ ແລະ ປະຊາຊົນບັນດາເຜົ່າ ໃຫ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຕາມນະໂຍບາຍຂອງພັກ-ລັດວາງອອກໃຫ້ເຂັ້ມງວດ. ໂດຍສະເພາະແມ່ນການຕິດປະກາດລາຄາສິນຄ້າ, ໂຄສະນາສິນຄ້າ ແລະ ຄ່າບໍລິການຕ່າງໆ ໃຫ້ເປັນເງິນກີບເທົ່ານັ້ນ. ພ້ອມນັ້ນ, ໄດ້ມີການໂຄສະນາເຜີຍແຜ່ນິຕິກຳທີ່ກ່ຽວຂ້ອງ ເພື່ອເປັນການປູກຈິດສຳນຶກໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງ

ຊ່ວຍກັນເປັນເຈົ້າການໃນການຕຳນິ ແລະ ກ່າວເຕືອນ ເມື່ອພົບເຫັນສະພາບການທີ່ລະເມີດຕໍ່ລະບຽບກົດໝາຍ ເຊັ່ນ: ການແລກປ່ຽນຊື້-ຂາຍເງິນຕາຕ່າງປະເທດແບບຊະຊາຍ, ການຕິດປະກາດລາຄາ, ການຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການເປັນເງິນຕາຕ່າງປະເທດ ແລະ ການກຳນົດອັດຕາແລກປ່ຽນບໍ່ສອດຄ່ອງກັບລະບຽບການ.




ນອກນີ້, ພາຍໃນງານຍັງມີການສ້າງກິດຈະກຳ ກ່ຽວກັບການສົ່ງເສີມການນຳໃຊ້ເງິນກີບ ແລະ ມີການ ຖາມ-ຕອບ ເພື່ອແຈກຂອງລາງວັນ ຈາກທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ.



**ຂ່າວ: ກັນຈະນາ ໄຊຍະວົງ**

**ພາບ: ເຄນສະຫວັດ ສຸກສະຫວັນ**